ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງສຶກສາທິການ ແລະ ກິລາ
ມະຫາວິທະຍາໄລ ສຸພານຸວົງ

ເລກທີ: 188 /ມສ
ວັນທີ: 16 ກໍລະກົດ 2021

# ໜັງສືແຈ້ງເຊີນ

**ເຖິງ: ນັກສຶກສາ, ສະຖາປະນິກ, ບໍລິສັດອອກແບບ ແລະ ຜູ້ສົນໃຈ.**

**ເລື່ອງ: ການແຂ່ງຂັນອອກແບບຫໍມູນເຊື້ອ ປະທານ ສຸພານຸວົງ.**

I. ມະຫາວິທະຍາໄລ ສຸພານຸວົງ ໄດ້ສ້າງຕັ້ງຂຶ້ນປີ 2003 ແລະ ໄດ້ຮັບກຽດອັນສູງສົ່ງ ທີ່ໄດ້ນໍາເອົາຊື່ຂອງ ປະທານ ສຸພານຸວົງ ຊຶ່ງເປັນເຊື້ອເຈົ້າທີ່ມີຄວາມຮູ້ຄວາມສາມາດ ແລະ ສະຫຼະຍົດຖາບັນດາສັກມານໍາພາ ປະຊາຊົນຜູ້ຮັກປະເທດຊາດ ແລະ ຕ້ອງການເອກະລາດຕໍ່ສູ້ກັບຈັກກະພັດຜູ້ຮຸກຮານ ຈົນສາມາດປົດປ່ອຍປະເທດຊາດ ແລະ ເພິ່ນກໍ່ຍັງເປັນປະທານປະເທດຜູ້ທໍາອິດຂອງ ສປປ ລາວ. ດັ່ງນັ້ນ, ເພື່ອໃຫ້ນັກສຶກສາ, ນັກຮຽນຮູ້ ແລະ ຜູ້ສົນໃຈໄດ້ຮຽນຮູ້ຄຸນສົມບັດ,ສິນທໍາປະຕິວັດຂອງປະທານ ສຸພານຸວົງທາງມະຫາວິທະຍາໄລ ສຸພານຸວົງ ຈຶ່ງໄດ້ຕົກລົງທີ່ຈະສ້າງຫໍມູນເຊື້ອດັ່ງກ່າວຂຶ້ນ:

- ເພື່ອເປັນສະຖານທີ່ສຶກສາເຖິງຄຸນງາມຄວາມດີ ແລະ ຮໍ່າຮຽນເອົາຄຸນສົມບັດສິນທໍາປະຕິວັດຂອງ ປະທານ ສຸພານຸວົງ.
- ເພື່ອເປັນສະຖານທີ່ຈັດກິດຈະກໍາສົ່ງເສີມການຮຽນການສອນ ແລະ ແລກປ່ຽນຄວາມຮູ້ຂອງອາຈານ ແລະ ນັກສຶກສາ
- ເພື່ອໃຫ້ຫໍມູນເຊື້ອດັ່ງກ່າວເປັນສະຖາປັດຕະຍະກໍາທີ່ໂດດເດັ່ນ,ສ້າງສະພາບແວດລ້ອມໃໝ່ໃຫ້ກັບ ມະຫາວິທະຍາໄລ ສຸພານຸວົງ ແລະ ສະແດງອອກເຖິງຄວາມເປັນຕົວຕົນຂອງປະທານ ສຸພານຸວົງ.

ດັ່ງນັ້ນ,ຈຶ່ງຮຽນເຊີນບັນດາທ່ານເຂົ້າຮ່ວມແຂ່ງຂັນອອກແບບໂຄງການອາຄານດັ່ງກ່າວນີ້ດ້ວຍ.

## II. ຄໍາອະທິບາຍຫຍໍ້ຂອງໂຄງການ

1. ຫໍມູນເຊື້ອປະທານ ສຸພານຸວົງ ເປັນສະຖານທີ່ຮຽນຮູ້ ຜົນງານການເຄື່ອນໄຫວຂອງ ເພິ່ນເພື່ອໃຫ້ບັນດາ ນັກຮຽນ, ນັກສຶກສາ, ປັນຍາຊົນ, ຜູ້ສົນໃຈໄດ້ຮຽນຮູ້ປະຫວັດ ແລະ ຜົນງານລວມທັງຄຸນສົມບັດ ສິນທໍາປະຕິວັດຂອງເພິ່ນ ແລະ ຍັງເປັນສະຖານທີ່ພັກຜ່ອນ, ສົ່ງເສີມກິດຈະກໍາກ່ຽວກັບການຮຽນການສອນຂອງ ມະຫາວິທະຍາໄລ ສຸພານຸວົງ. ນອກຈາກນີ້ແລ້ວສະຖານທີ່ດັ່ງກ່າວຍັງສະແດງເຖິງຄວາມເປັນຕົວຕົນຂອງ ປະທານສຸພານຸວົງ ສ້າງເອກະລັກທາງສະຖາປັດຕະຍະກໍາ ແລະ ສົ່ງເສີມສະພາບແວດລ້ອມທີ່ດີໃຫ້ກັບ ມະຫາວິທະຍາໄລ ສຸພານຸວົງ.

**2. ອົງປະກອບຂອງໂຄງການ**

| ລ/ດ | ອົງປະກອບ | ຈໍານວນຫ້ອງ | ເນື້ອທີ່ | ຈໍານວນຄົນ | ໝາຍເຫດ |
|---|---|---|---|---|---|
| 1 | ຫ້ອງໃຫຍ່ຕ້ອນຮັບ | 1 ຫ້ອງ | | 40 | |
| 2 | ຫ້ອງວາງສະແດງມູນເຊື້ອ | 1 ຫ້ອງ | | 40 | |
| 3 | ຫ້ອງອະເນກປະສົງ (ວາງສະແດງຊົ່ວຄາວ) | 1 ຫ້ອງ | | 50-80 | |

| | | | | | |
|---|---|---|---|---|---|
| 4 | ຫ້ອງບັນຍາຍ | 1 ຫ້ອງ | | 40 | |
| 5 | ຫ້ອງການ | 1 ຫ້ອງ | | 2 | |
| 6 | ຫ້ອງສາງ | 1 ຫ້ອງ | | - | |
| 7 | ຫ້ອງນ້ຳສະຫາລະນະ | 1 ຫ້ອງ | | - | |
| 8 | ຫ້ອງອື່ນໆທີ່ຜູ້ອອກແບບເຫັນວ່າເໝາະສົມ | - | - | - | |
| **ໝາຍເຫດ:** ຜູ້ອອກແບບສາມາດກຳນົດເນື້ອທີ່ໄດ້ຕາມມາດຕະຖານ ແລະ ຄວາມເໝາະສົມ | | | | | |

3. **ທີ່ຕັ້ງຂອງໂຄງການ.**

ຕັ້ງຢູ່ບໍລິເວນສວນຊາວໜຸ່ມຂອງມະຫາວິທະຍາໄລ ສຸພານຸວົງ ( ວິທະຍາເຂດບ້ານດອນໃໝ່ )

- ທິດເໜືອຕິດກັບອານຸສອນສະຖານ ປະທານ ສຸພານຸວົງ ແລະ ຄະນະ ວິສະວະກຳສາດ
- ທິດໃຕ້ຕິດກັບຫ້ອງການ ແລະ ສະໂມສອນໃຫຍ່ ມສ
- ທິດຕາເວັນອອກຕິດກັບ ຄະນະ ສະຖາປັດຕະຍະກຳສາດ
- ທິດຕາເວັນຕົກຕິດກັບ ຫໍສະໝຸດ ແລະ ຫໍອາຫານ ມສ




ແຜນຜັງທີ່ຕັ້ງໂຄງການ



ພາບຖ່າຍ ( A )



ພາບຖ່າຍ ( B )

## III. ຫຼັກການໃນການແຂ່ງຂັນ ແລະ ຜົນງານການແຂ່ງຂັນການອອກແບບ

1. ໃຫ້ມີຄວາມໂດດເດັ່ນ ສວຍງາມທາງດ້ານສິລະປະ ແລະ ສື່ຄວາມໝາຍເຖິງປະທານ ສຸພານຸວົງ
2. ມີອົງປະກອບທີ່ເໝາະສົມກັບວັດຖຸປະສົງທີ່ໄດ້ກຳນົດໄວ້
3. ສາມາດກໍ່ສ້າງຕົວຈິງໄດ້
4. ຈຳນວນຊັ້ນບໍ່ກາຍ 2 ຊັ້ນ

## IV. ລະບຽບການສຳລັບການແຂ່ງຂັນ

1. ຜູ້ທີ່ຈະສົ່ງຜົນງານເຂົ້າໃນການແຂ່ງຂັນອອກແບບຫໍມູນເຊື້ອຂອງ ປະທານ ສຸພານຸວົງ ປະກອບດ້ວຍ ນັກສຶກສາ, ອາຈານ, ບຸກຄົນທົ່ວໄປ ແລະ ບໍລິສັດອອກແບບໂດຍບໍ່ຈຳກັດຈຳນວນຜົນງານທີ່ສົ່ງ.
2. ຮູບແບບລັກສະນະການນຳສະເໜີເປັນພາບທີ່ແຕ້ມດ້ວຍມື ຫຼື ໃຊ້ໂປຣແກມຊ່ວຍອອກແບບກໍ່ໄດ້.
3. ຜົນງານທີ່ສົ່ງເຂົ້າແຂ່ງຂັນຕ້ອງເປັນຜົນງານຂອງຕົນເອງທີ່ອອກແບບໃໝ່ ຫ້າມຮຽນແບບ ດັດແປງ ຜົນງານທີ່ເຄີຍກໍ່ສ້າງ ແລະ ສົ່ງເຂົ້າແຂ່ງຂັນບ່ອນອື່ນໆມາກ່ອນ.

V. ການສົ່ງຜົນງານການແຂ່ງຂັນ

1. ບອກລາຍລະອຽດຕ່າງໆທີ່ກ່ຽວຂ້ອງລົງໃນຜົນງານຂອງຕົນເອງ.
2. ຜົນງານທີ່ສົ່ງເຂົ້າແຂ່ງຂັນຕ້ອງມີຄໍາອະທິບາຍ, ແນວຄວາມຄິດໃນການອອກແບບ, ແຮງບັນດານໃຈໃນການອອກແບບ ແລະ ຊື່ຄວາມສໍາຄັນຕ່າງໆ.
3. ຜົນງານການແຂ່ງຂັນຕ້ອງເປັນຮູບພາບສີ ຈັດໃສ່ເຈ້ຍບອດຂະໜາດ A1 ( 420 X 594 mm ) ພ້ອມບັນທຶກຟາຍ(file) ແຕ້ມຕົ້ນສະບັບ 2D , 3D , ຮູບພາບ ແລະ ອື່ນໆ ທີ່ກ່ຽວຂ້ອງໃສ່ແຜ່ນ CD ຫຼື DVD ພ້ອມ.
4. ຜົນງານທີ່ສົ່ງເຂົ້າມາແຂ່ງຂັ້ນປະກອບຮູບພື້ນຖານດັ່ງນີ້:
    - ແຜນຜັງບໍລິເວນ
    - ແຜນຜັງ
    - ຮູບດ້ານ 4 ດ້ານ ມ 100
    - ຮູບຕັດໂຄງສ້າງ
    - ທັດສະນີຍະພາບທັງພາຍໃນ, ພາຍນອກ ແລະ ຮູບອື່ນໆຕາມທີ່ຈໍາເປັນຂອງຜູ້ສະເໜີ

IV. ລາງວັນການແຂ່ງຂັນອອກແບບ ຫໍມູນເຊື້ອຂອງທ່ານ ປະທານ ສຸພານຸວົງ

- ລາງວັນທີ1 ເງິນ 5,000,000 ກີບ ພ້ອມໃບກຽດຕິຄຸນຈາກ ມະຫາວິທະຍາໄລ ສຸພານຸວົງ
- ລາງວັນຊົມເຊີຍມີ 2 ລາງວັນ, ລາງວັນລະ 1,000,000 ກີບ
- ສ່ວນທີ່ເຫຼືອຈະໄດ້ໃບຢັ້ງຢືນ ແລະ ໃບຍ້ອງຍໍຈາກ ມະຫາວິທະຍາໄລ ສຸພານຸວົງ

**ໝາຍເຫດ:**

- ຜູ້ໄດ້ຮັບລາງວັນ ສາມາດຕິດຕໍ່ຮັບເອົາເງິນລາງວັນ ແລະ ໃບຢັ້ງຢືນຈາກມະຫາວິທະຍາໄລ ຫຼັງຈາກປະກາດຜົນ 2 ອາທິດ(ເບີຕິດຕໍ່: 02099994920)
- ຖ້າຫາກບໍ່ມີຜົນງານໃດຜ່ານມາດຖານການຕັດສິນຂອງຄະນະກໍາມະການຈະບໍ່ມີການປະກາດຜົນຜູ້ທີ່ໄດ້ຮັບລາງວັນ
- ຜົນການຕັດສິນຂອງຄະນະກໍາມະການຖືວ່າເປັນທີ່ສິ້ນສຸດ ແລະ ຈະບໍ່ໄດ້ສົ່ງຜົນງານຄືນໃຫ້ຜູ້ສົ່ງຜົນງານເຂົ້າແຂ່ງຂັນ
- ທຸກຜົນງານຈະໄດ້ຮັບການວາງສະແດງທີ່ ມະຫາວິທະຍາໄລ ສຸພານຸວົງ ແລະ ສະມາຄົມສະຖາປະນິກ ແລະ ວິສະວະກອນກໍ່ສ້າງລາວ.

VII. ກໍານົດສົ່ງຜົນງານການແຂ່ງຂັນ

ກໍານົດການສົ່ງຜົນງານ ໃນວັນທີ 1 ເດືອນ 11 ປີ 2021 ( ຕາມໃນງລັດຖະການ )ທີ່ຫ້ອງການເຄຫາ - ບໍລິການ (ຫ້ອງ 110) ສໍານັກງານອະທິການບໍດີ ມະຫາໄລສຸພານຸວົງ

- ສອບຖາມຂໍ້ມູນເພີ່ມເຕີມໄດ້ທີ່ຫ້ອງການເຄຫາ - ບໍລິການ ມະຫາວິທະຍາໄລ ສຸພານຸວົງ (ເບີຕິດຕໍ່: 02099994920)

XIII ປະກາດຜົນງານການແຂ່ງຂັນ

ປະກາດຜົນການແຂ່ງຂັນ ໃນວັນທີ 30 ເດືອນ 11 ປີ 2021 ທາງເວບໄຊຂອງມະຫາວິທະຍາໄລ ສຸພານຸວົງ www. Souphanouvong University; facebook Souphanouvong UNIV.

**ອະທິການບໍດີ**

ຮສ. ປທ. ວິໄຊ ຈັນສະຫວ່າງ